
ະວະນິຍາຍ
ຟ້າປະທານຮັກ
ໂດຍ ດອກເຂັມແດງ

30.06.07

# ລາວ ຟອດ ຊິຕີ

# Lao Ford City

ຂໍຂອບໃຈທີ່ໃຫ້ການສະໜັບສະໜູນ

## ນະວະນິຍາຍ ລຳດັບທີ 3

| | |
|---|---|
| ຟ້າປະທານຮັກ | ຊື່ເລື່ອງ |
| ດອກເຂັມແດງ | ຂຽນ |
| ວັນໄນ | ພາບປະກອບ |
| ວັນສະເຫຼີມ | ອອກແບບປົກ |

ພິມຄັ້ງທຳອິດ ທີ່ ໂຮງພິມກະຊວງສຶກສາ
ຂະໜາດ 13 x 19
ຈຳນວນ 1.000 ເຫຼັ້ມ
ໃບທະບຽນພິມຈຳໜ່າຍເລກທີ 157 / ພຈ / 2006
ລົງວັນທີ 23 ສິງຫາ 2006

ລົງພິມເປັນຕອນທີ່ໜັງສືພິມລາຍວັນປະເທດລາວ: 22 ສິງຫາ 2004

### ສະຫງວນລິຂະສິດ

ຫ້າມນຳໜັງສືເຫຼັ້ມນີ້ໄປອັດສຳເນົາ ເພື່ອຂາຍຫຼືເຜີຍແຜ່ ບໍ່ວ່າ ເພື່ອໃຊ້ໃນກິດຈະການໃດກໍຕາມ ໂດຍບໍ່ໄດ້ຮັບອະນຸຍາດເປັນ ລາຍລັກອັກສອນຈາກເຈົ້າຂອງລິຂະສິດ ຫາກລະເມີດຈະຖືກດຳເນີນຄະດີຕາມກົດໝາຍ

# ຄຳນິຍົມ ( ຄຳນຳ )

ນະວະນິຍາຍ ແມ່ນບົດຂຽນທີ່ປະດິດແຕ່ງຂຶ້ນ ເພື່ອສ່ອງແສງຄວາມເປັນຈິງໃນຊີວິດຂອງຜູ້ຄົນໃນສັງຄົມ ໂດຍຜູ້ຂຽນຄັດເລືອກເອົາບົດຮຽນທີ່ດີຂົ້ມູນທີ່ເປັນປະໂຫຍດ ເພື່ອຊີວິດມ່ອບຜ່ານພຶດຕິກຳຂອງຕົວລະຄອນໃຫ້ຜູ້ອ່ານເອົາໄປຄິດ ແລະ ອາດນຳໄປ ປະຕິບັດໃນຊີວິດປະຈຳວັນໄດ້. ນະວະນິຍາຍທີ່ດີຈຶ່ງເປັນແວ່ນແຍງໃຫ້ແກ່ສັງຄົມ ທຸກຍຸກທຸກສະໄໝ. ແນ່ນອນນັກຂຽນຍັງແມ່ນນັກຄິດ ແລະ ນັກຄິດຕ້ອງໄປກ່ອນສັງຄົມກ້າວໜຶ່ງສະເໝີ ຄືນັກຂຽນຈະ ຫຼຽວໄປທາງໜ້າ ແລະ ຫຼິງເຫັນໄດ້ວ່າຈະມີຫຍັງເກີດຂຶ້ນແລ້ວນັກຂຽນກໍຈະຊີ້ບອກໃຫ້ພວກເຮົາ ທີ່ເປັນສະມາຊິກຂອງສັງຄົມຄິດວ່າ ຈະຫາທາງແກ້ໄຂ ຫຼື ກັນໄວ້ກ່ອນແນວໃດ.

ສຳຫຼັບຂ້າພະເຈົ້ານະວະນິຍາຍ ຫຼື ແມ່ນແຕ່ຊາດົກ (ເລື່ອງຊີວິດໃນສະໄໝກ່ອນ ) ລ້ວນແຕ່ຝາກຂໍ້ຄິດໃຫ້ສະຕິເຕືອນແກ່ຜູ້ອ່ານບໍ່ວ່າຈະແມ່ນບັນຫານ້ອຍໆ ຂອງຄອບຄົວຫຼືບັນຫາໃຫຍ່ລະດັບຊາດ ) ໂດຍຜ່ານພຶດຕິກຳຂອງຕົວລະຄອນໄດ້. “ ຟ້າປະທານ ຮັກ “ ທີ່ພວມຈະຜ່ານສາຍຕາທ່ານຜູ້ອ່ານ ໄປນີ້ມີເນື້ອຫາສາລະ ທີ່ຈະເຕືອນຄວາມຮູ້ສຶກຂອງທ່ານບໍ່ວ່າທ່ານຈະເປັນພໍ່ແມ່ເປັນລູກ ຫຼື ຜູ້ອື່ນໃນຄອບຄົວກໍຄືໃນສັງຄົມ.

ເນື້ອໃນທັງໝົດນີ້ຈະກ່າວເຖິງບົດບາດ ແລະ ໜ້າທີ່ ແລະ ສິ່ງທີ່ຄວນເປັນໄປອັນທີ່ເໝາະສົມ ແລະ ບໍ່ເໝາະສົມ ຄວນ ຫຼື ບໍ່ຄວນລ້ວນແຕ່ເປັນບົດຮຽນ.

ໃນຊີວິດຈິງຜູ້ຂຽນ “ດອກເຂັມແດງ” ກໍພົບຜ່ານຊີວິດທີ່ສົມບູນແບບຂອງມາດຕະຖານ ຄອບຄົວລາວໃນຍຸກສະໄໝປັດຈຸບັນ ແລະຂອງຜູ້ເປັນແມ່ມາແລ້ວ. ແຕ່ສາຍຕາຂອງແມ່ທີ່ເປັນນັກຂຽນ ມັກຈະຫຼຽວໄປ ຮອບໆຕົວຫຼາຍຮ້ອຍຫຼາຍພັນຮອບ ແລະ ຍັງຫຼຽວໄປໄກງພຸ້ນເພື່ອໄວ້ສະເໝີ “ ດອກເຂັມແດງ ” ຈຶ່ງເຫັນຄວາມປ່ຽນແປງອັນ

ຫຼາກຫຼາຍຂອງ ສັງຄົມທີ່ພວມເກີດຂຶ້ນ ແລະ ຫຼືພວມຈະເກີດ. ການບັນທຶກເຫດການທັງສະແດງແນວຄິດສ້າງສັນຂອງ "ດອກເຂັມແດງ" ຜ່ານຕົວລະຄອນທຸກຕົວໃນ " ຟ້າປະທານຮັກ " ນີ້ຈຶ່ງຄືວ່າສົມຈິງ ແລະພໍເໝາະພໍດີ. ເຫດການທັງໝົດແມ່ນຊີວິດສັງຄົມທັນສະໄໝຂອງຊາຍໜຸ່ມຍິງສາວໃນເມືອງຫຼວງແຕ່ທີ່ໜ້າຊົມເຊີຍ ແລະ ເປັນຕາຮັກກໍແມ່ນນັກຂຽນສາມາດສອດແຊກຄະຕິສິລະທຳ ແລະ ວັດທະນະທຳອັນດີງາມບາງດ້ານ ຝາກໄວ້ນຳ ຄວາມທັນສະໄໝເຫຼົ່ານີ້.

ຂ້າພະເຈົ້າເຊື່ອວ່າ ທ່ານຜູ້ອ່ານຈະໄດ້ຮັບທັງຄວາມ ເພີດເພີນ ແລະ ບົດຮຽນຊີວິດທີ່ເໝາະກັບໃຜຜູ້ໜຶ່ງທີ່ທ່ານຮັກ ແລະ ຢາກຢູ່ຄຽງໃກ້ແລ້ວເລືອກໃຊ້ບົດຮຽນນັ້ນຕາມອັດທະຍາໄສ.

ນະຄອນຫຼວງ ວຽງຈັນ, ວັນທີ 15 ມິຖຸນາ 2006

ດວງຈຳປາ

( ດາຣາ ກັນລະຍາ )

# ຄຳນຳແລະຄຳຂອບໃຈ
# ຈາກຜູ້ຂຽນ

ມີຫຼາຍຄົນມັກຕັ້ງຄຳຖາມວ່າ " ເນື້ອຄູ່ມີຈິງຫຼືບໍ່ " ສຳລັບຂ້າພະເຈົ້າຄິດວ່າ " ມີຈິງ " ພຽງແຕ່ ບໍ່ມີໃຜສາມາດຮູ້ໄດ້ລ່ວງໜ້າວ່າຜູ້ທີ່ເຮົາເລືອກ ແມ່ນເນື້ອຄູ່ແທ້ຂອງເຮົາຫຼືບໍ່? ຫຼືວ່າເຮົາປ່ອຍໃຫ້ເນື້ອຄູ່ຂອງເຮົາຜ່ານເລີຍໄປ ເພາະວ່າກົດຂອງ "ຟ້າ" ແມ່ນມີໜ້າທີ່ປະທານຮັກໃຫ້ເທົ່ານັ້ນແຕ່ຈະເລືອກໃຜແມ່ນເຮົາເປັນຜູ້ຕັດສິນໃຈເອງ.

ນະວະນິຍາຍເລື່ອງ " ຟ້າປະທານຮັກ" ເປັນບົດເລື່ອງໜຶ່ງທີ່ຂ້າພະເຈົ້າໄດ້ບັນຈົງຂຽນຢ່າງສຸດຝີມື ຊຶ່ງຕົວລະຄອນເອກ ຂອງເລື່ອງຄືພອຍໄພລິນ ແພັດ ແລະ ມະໂນລົມ ໄດ້ປະສົບພົບພໍ້ກັນ ປຽບດັ່ງຟ້າໄດ້ລີຂິດໃຫ້ພວກເຂົາໄດ້ພົບກັນແຕ່ສຸດທ້າຍ ແມ່ນເປັນໄປຕາມທາງທີ່ພວກເຂົາລີຂິດເອງ.

ຂ້າພະເຈົ້າ ຍັງໄດ້ນຳເອົາຄຳທີ່ເຖົ້າແກ່ບູຮານ ໄດ້ກ່າວໄວ້ວ່າບຸບເພສັນນິວາດແມ່ນບຸນສ້າງແຕ່ຫຼັງຂອງຄົນຄູ່ໜຶ່ງ, ຄຳວ່າຊູ້ແຕ່ແຖມແມນແຕ່ຟ້າ..., ບຸນບໍ່ຮອດຍອດບໍ່ກຽວ... ແລະ ອື່ນມາໃສ່ໃນບົດປະພັນຊຶ່ງເປັນຄຳຕອບໄດ້ດີສຳລັບຜູ້ທີ່ຕັ້ງຄຳຖາມວ່າ "ເນື້ອຄູ່ມີຈິງຫຼືບໍ່ " ພ້ອມກັນນີ້ຂ້າພະເຈົ້າຂໍສະແດງຄວາມຂອບໃຈຢ່າງສູງມາຍັງ " ທ່ານ ປ້າດາຣາ ກັນລະຍາ ຫຼື ດວງຈຳປາ " ທີ່ໄດ້ໃຫ້ ກຽດຂຽນຄຳນຳອັນມີຄ່າມອບໃຫ້ຊຶ່ງຂ້າພະເຈົ້າຮູ້ສຶກພູມໃຈຢ່າງສູງສຸດທີ່ໄດ້ຮັບກຽດນີ້ ພິເສດສຸດ, ຂ້າພະເຈົ້າຂໍສະແດງຄວາມຂອບໃຈຢ່າງສູງມາຍັງ ບໍລິສັດ Ford Motor Company ທີ່ໄດ້ໃຫ້ການສະໜັບສະໜູນໃນການຈັດພິມ.

ອີກເທື່ອໜຶ່ງຂໍຂອບໃຈ ມາຍັງເພື່ອນມິດຜູ້ໃຈດີທຸກຄົນທີ່ໄດ້ໃຫ້ການຊ່ວຍເຫຼືອໃນທຸກໆດ້ານເຮັດໃຫ້ຜົນງານສຳເລັດອອກມາດັ່ງທີ່ເຫັນນີ້

ສຸດທ້າຍ ຂໍຝາກບົດປະພັນເລື່ອງນີ້ ສູ່ອ້ອມໃຈຂອງຜູ້ອ່ານຫວັງວ່າບົດເລື່ອງຄົງສ້າງຄວາມບັນເທີງໃຈແກ່ທ່ານບໍ່ຫຼາຍກໍໜ້ອຍ ແລະ ຫວັງຢ່າງຍິ່ງວ່າ ຄວາມຮັກທີ່ທຸກທ່ານໄດ້ພົບພໍ້ຈະເປັນດັ່ງສິ່ງສວຍງາມ ທີ່ຫຼໍ່ລ້ຽງຈິດໃຈໃຫ້ມີຄວາມສຸກ ມີຊີວິດຊີວາທຸກຄັ້ງທີ່ຄິດເຖິງ.

ດ້ວຍຄວາມປາດຖະໜາດີ

ດອກເຂັມແດງ

ນະຄອນຫຼວງ ວຽງຈັນ, ວັນທີ 22 ພຶດສະພາ 2006

ໂທ: (020) 5 694 459

# ເລື່ອງຫຍໍ້ "ຟ້າປະທານຮັກ"

ພອຍໄພລິນເປັນຍິງສາວຜູ້ທີ່ຕັ້ງ ປະນິທານສໍາລັບຄວາມຮັກຂອງຕົນເອງໄວ້ສູງສົ່ງ ແຕ່ເມື່ອມີເຫດບັງເອີນໃຫ້ນາງໄດ້ພົບແພັດຜູ້ທີ່ອາໃສຢູ່ຕ່າງແດນກໍເຮັດໃຫ້ທັງສອງເກີດຄວາມຮັກຂຶ້ນໃນຫົວໃຈແຕ່ຄວາມຮັກກັບອຸປະສັກເປັນຂອງຄູ່ກັນ ການພັດພາກເຮັດໃຫ້ຄວາມຮັກຂອງພວກເຂົາບໍ່ໝັ້ນຄົງ.

ແຕ່ວ່າຟ້າກໍໄດ້ປະທານຮັກຄັ້ງໃໝ່ແກ່ນາງ ເມື່ອມະໂນລົມກ້າວເຂົ້າມາສູ່ຊີວິດຢ່າງບັງເອີນອີກເຊັ່ນດຽວກັນ ຮັກຄັ້ງນີ້ກໍນໍາຄວາມເຈັບປວດມາສູ່ນາງອີກຄັ້ງຍ້ອນຄວາມບໍ່ຍອມເຂົ້າໃຈກັນ ແລະ ຄວາມຫວາດລະແວງ ແຕ່ໃນຄວາມຫວັ່ນໃຈນັ້ນກໍຍັງມີຄວາມຖະຫອິນຫາ ເປັນທຸກເພາະເສຍດາຍໃນຮັກ ແລະ ເຮັດໃຫ້ນາງສອງຈິດສອງໃຈ ເມື່ອແພັດໄດ້ຫວນກັບມາອີກຢ່າງບໍ່ຄາດຝັນ.

ເຖິງເວລາແລ້ວທີ່ນາງຈະຕັດສິນໃຈວ່າ ຈະເລືອກໃຜ ແລະ ໃຜແມ່ນເນື້ອຄູ່ແທ້ທີ່ນາງປາດຖະໜາ ແລະ ນາງກໍເປັນຄົນທີ່ເຂົາຮັກ ແລະ ປາດຖະໜາເຊັ່ນດຽວກັນ.



# 1

ຄ່ຳຄືນ ຂອງວັນສິ້ງທ້າຍປີເກົ່າ ຕ້ອນຮັບປີໃໝ່ຂອງເດືອນທັນວາ ປີ 2001

ທີ່ມຸມໜຶ່ງຂອງນະຄອນຫຼວງວຽງຈັນ

ພອຍໄພລິນແຕ່ງຕົວ ຢ່າງພິຖີພິຖັນເຮັດໃຫ້ນາງທີ່ມີຄວາມງາມໜ້າຮັກຢູ່ແລ້ວດ້ວຍໃບໜ້າທີ່ປະດັບ ດ້ວຍດວງຕາຄົມຊຶ້ງພາຍໃຕ້ຄິ້ວກົ່ງໄດ້ຮູບຮັບກັບປາກເຕັມອີ່ມ ແລະ ດັງໂດ່ງພໍງາມບວກກັບຮູບຮ່າງທີ່ໄດ້ສັດສ່ວນຍິ່ງເຮັດໃຫ້ມີສະເໜ່ ຂຶ້ນໄປອີກ ແລະ ການທີ່ຈະອອກໄປທ່ຽວນຳໝູ່ແຕ່ລະເທື່ອ ກໍຕ້ອງໄດ້ຮັບການອະນຸ ຍາດຈາກພໍ່ແມ່ເສຍກ່ອນແຕ່ ມື້ນີ້ໂອກາດກໍດີແທ້ໆ ເພາະພໍ່ແມ່ນໃຈດີເປັນພິເສດ ສ່ວນແມ່ກໍບໍ່ ເໜັບແນມນຳເລື່ອງເຄື່ອງນຸ່ງຄືທຸກເທື່ອເມື່ອເຫຼືອດເຫັນນາງນຸ່ງສິ້ນໄໝສີແດງເຂົ້າກັບເສື້ອຜ້າໄໝລາວ ສີຂາວໄຂ່ມຸກ ແລະ ມີຜ້າຄຸມໄຫຼ່ໄໝມ່ອນ ລາຍດອກໄມ້ບາງໆ ຕາມສະໄໝນິຍົມຂອງສາວ ນ້ອຍຍຸກປັດຈຸບັນ.

ສຽງບີບແກລົດຢູ່ໜ້າບ້ານ ພອຍໄພລິນຂວ້ຽວຈັບເອົາກະເປົາພາຍ ແລະ ຟ້າວແລ່ນໄປຫາ ເພາະຢ້ານວ່າສຸລິນທາຈະບີບແກສຽງດັງອີກພໍໄປຮອດກໍອິດຮ້າຍໝູ່ບໍ່ໄດ້

"ເອົ້າ ບີບລົງໄປຈັກໜ່ອຍ ແມ່ເຮົາຮ້າຍແລ້ວບໍ່ໄດ້ໄປຊ້ຳດອກ" ສຸລິນທາຫົວຄຶກຄັກ ແລ້ວເວົ້າວ່າ

"ຢ້ານໂຕນານມາເຮົາກໍເລີຍບີບ ແຮະ ແຮະ ຮີບຂຶ້ນລົດໝູ່ຖ້າຢູ່ງານໝົດທຸກຄົນແລ້ວ"

ຢູ່ທີ່ງານລາຕີສະໂມສອນ ທີ່ຈັດຂຶ້ນໃນໂຮງແຮມ ທີ່ມີລະດັບໃນເມືອງວຽງຈັນ ກຸ່ມສາວໆທີ່ຢືນຖ້າຢູ່ໜ້າໂຮງແຮມ ເມື່ອເຫັນພອຍໄພລິນ ແລະ ສຸລິນທາຍ່າງເຂົ້າມາ ກໍພາກັນຫຼຸມມາໃສ່ແລ້ວ ທັງໝົດກໍຍ່າງເປັນ

ກຸ່ມເຂົ້າປະຕູງານໄປ

ຢູ່ຂ້າງໃນງານປະດັບດ້ວຍແສງໄຟຫຼາກຫຼາຍສີ ພ້ອດອກໄມ້ ແລະ ໝາກປູມເປົ້າ ຖືກໃຊ້ເອ້ຍ້ອງຢ່າງງົດງາມ ຜູ້ຄົນທັງຫຼາຍ ທີ່ມາໃນງານ ຕ່າງກໍແຕ່ງກາຍສຸພາບ ແລະ ມີສີໜ້າເບີກບານ ພວກຜູ້ສາວພາກັນນັ່ງ ໂຕະພິເສດທີ່ສາມາດສັ່ງອາຫານ ແລະ ເຄື່ອງດື່ມໄດ້ໃນວົງເງິນສູງເພາະ ຜູ້ປົກຄອງຂອງສຸລິນທາ ໄດ້ບໍລິຈາກເງິນ ສົມທົບທຶນໃຫ້ແກ່ ການຈັດ ງານໄວ້ແລ້ວ

ໃນມື້ເທດສະການ ສຳຄັນແບບນີ້ ໝູ່ມສາວທີ່ຫົວໃຈຍັງຫວ່າງກໍ ມີຄວາມຫວັງວ່າຈະໄດ້ພົບຄູ່ ສ່ວນຜູ້ທີ່ມີຄູ່ແລ້ວ ກໍເຮັດໃຫ້ຫຼາຍຄົນອິດ ສາໄປຕາມໆກັນ

ພໍເມື່ອເຫັນຊາຍໝຸ່ມທີ່ມູາດດີ ສາວໆ ໃນກຸ່ມກໍພັນມາຊຸບຊິບກັນ ແລະ ຍິ້ມໃຫ້ເປັນການເຊື້ອມສາຍສຳພັນ ແລະ ພາບທີ່ໝຸ່ມໆສາວໆຢືນ ຄຽງຂ້າງກັນຢອກລໍ້ກັນ ກໍເຮັດໃຫ້ງານມີສີສັນ ແລະ ຊີວິດຊີວາຂຶ້ນຕື່ມ ພອຍໄພລິນຫຼຽວເຫັນໝູ່ທີ່ນັ່ງຢູ່ບໍ່ໄກ ຍິ່ງມີກວັກໃສ່ທັງເຮັດສັນຍາລັກວ່າ ໃຫ້ໄປຫານາງໄດ້ຫັນມາບອກສົມລິດີ ເພື່ອນສະໜິດອີກຄົນວ່າ

"ສົມລິດີ ເຮົາຍ່າງໄປຫາໝູ່ຢູ່ພຸ້ນກ່ອນເດີ້ຈັກໜ່ອຍມາ"

ສົມລິດີ ຍິ້ມຢອກໆແລະເວົ້າເຢີຍວ່າ

"ໄປແມ່ ບາງທີອາດຈະມີພໍ້ເນື້ອຄູ່ທີ່ພຽບພ້ອມແບບ - ສາມໃບກັບຍອດ- ໃນອຸດົມຄະຕິຂອງໂຕກໍເປັນໄດ້ໄດ໋"

ພອຍໄພລິນພຽງແຕ່ຍິ້ມ ແລະ ຕີບຫຼັງໝູ່ຄ່ອຍໆ ເພາະມັນເປັນຄຳ ທີ່ໝູ່ມັກເວົ້າຢອກ ຍ້ອນວ່າ ໃນກຸ່ມກໍແມ່ນນາງຢູ່ແລ້ວທີ່ງາມເດັ່ນກ່ອນ ໝູ່ແຕ່ມັກເລືອກມັກຕິເຊັ່ນວ່າ " ຊາຍຄົນນັ້ນກໍອວດ ລວຍມັກຫຼິ້ນກິນ,ຄົນ ນີ້ ກໍສະແດງຕົວອວດເກັ່ງເລງ, ອີກຄົນໜຶ່ງກໍນິດໄສອ່ອນແອ ບໍ່ເປັນຕົວ ຂອງຕົວເອງ " ສາລະພັດແຕ່ນາງຈະວິຈານໄປບໍ່ແມ່ນວ່ານາງຫວັງໄວ້

ສູງສົ່ງເກີນໄປດອກ ຍ້ອນຮູ້ສຶກວ່າຍັງບໍ່ພົບກັບຜູ້ທີ່ນາງຝັນໄວ້ ແລະນາງກໍມີຊາຍໃນຝັນຢູ່ແລ້ວ ພຽງແຕ່ບໍ່ຮູ້ວ່າເຂົາຢູ່ແຫ່ງຫົນໃດ ບໍ່ຮູ້ວ່າມື້ໃດທີ່ຈະໄດ້ພົບພໍ້ກັບເຂົາຄືນນັ້ນຄິດວ່າ ຈັກມື້ໜຶ່ງເຂົາຄົງມາປະກົດຕົວ ຄຽງຂ້າງນາງແນ່ນອນ

" ອ້າວ ໄພລິນ ຄື ອາລົມບໍ່ດີປານໃດ ວັນສົ່ງທ້າຍປີເກົ່າຕ້ອນຮັບປີໃໝ່ຕ້ອງມ່ວນຊື່ນໄວ້ແມ້ "

ເພື່ອນຄົນໜຶ່ງທ້ວງຂື້ນ ເມື່ອເຫັນພອຍໄພລິນ ຍ່າງມາຫາ ແລະຢືນອີງຕັ່ງເອົາມືກອດເອິກຢ່າງໃຊ້ຄວາມຄິດປານຢູ່ໃນຫ້ອງເສັງ

"ບໍ່ໄດ້ເປັນຫຍັງນາ ພຽງແຕ່ເຮົາຍັງຄິດຮອດປີເກົ່າຢູ່!" ນາງເວົ້າຫ້ວນໆ

"ເຮີຍເບິ່ງພວກນັ້ນແມ້ ເຂົາເຈົ້າຄົງບໍ່ມີບ່ອນນັ່ງເຫັນຍ່າງ" ເວີ່ນໄປເວີ່ນມາຫຼາຍຮອບແລ້ວ ໂຣ! ມີແຕ່ຜູ້ໜ້າໃສໆທັ້ງເລີຍ ເຮົາສົນໃຈແລ້ວລະເຮົາຈໍາຜູ້ແຂ້ວໝາກແງນັ້ນເດີ"

ແກ້ວມະນີ ໝູ່ຄົນໜຶ່ງເວົ້າຂື້ນແບບເວົ້າຫຼິ້ນແກມແທ້ເພາະ ວ່າຄັນເຂົ້າກຸ່ມກັນແລ້ວແຕ່ລະຄົນກໍບໍ່ ແມ່ນຂອງວ່າຍ ພອຍໄພລິນ ງວາກໄປເບິ່ງຕາມສາຍຕາຂອງໝູ່ ແລະ ກໍເຫັນຊາຍໜຸ່ມກຸ່ມໜຶ່ງ ຢືນອໍກັນຢູ່ທັງຫຼຽວມາເບິ່ງນາງພໍດີກໍເລີຍຖາມຂື້ນວ່າ

" ພວກເຈົ້າບໍ່ມີບ່ອນນັ່ງເບາະ ເຮືອນຄືຊິຢູ່ໄກເພາະຈຶ່ງມາຊ້າແບບນີ້"

"ເຮືອນຂ້ອຍຢູ່ທາງທົ່ງນາ"

ສຽງຕອບຊື່ໆ ຈາກໜຸ່ມນ້ອຍໜ້າຕາຄົມເຂັ້ມ ທີ່ວຽບຂຶມກ່ອນໝູ່ ແລະ ກໍແມ່ນຜູ້ທີ່ແກ້ວມະນີຈອງໄວ້ແຕ່ຕົ້ນແລ້ວ ພອຍໄພລິນ ບໍ່ຄ່ອຍຈະສົນໃຈໃນສຽງຊື່ໆນັ້ນປານໃດ ນາງຄິດຢາກເວົ້າຢອກຜູ້ຢືນຢູ່ ທາງຂ້າງພຸ້ນ ເພາະໜ້າຕາເຂົາຄ້າຍຄືພະເອກເກົາຫຼີ ທີ່ກໍາລັງດັງຢູ່ແຕ່ເບິ່ງຊິງໝໍນັ້ນຄົງຈະຊອກຫາທາງໄປຫາໝູ່ຢູ່ແລ້ວ ກໍເລີຍລັບແລບໜີໄປ ຢ່າງບໍ່ທັນສັງເກດເບິ່ງກິລິຍາຂອງນາງ ແກ້ວມະນີ ຈີກຫົວໃສ່ໃຫ້ຊວນ ຜູ້ທີ່ຂຶມງ

ນັ້ນຄ້ອມພໍດີກັບເຂົາກໍາລັງ ຫັນຫລັງຈະຍ່າງຈາກໄປ ເພາະກິລິຍາທີ່ພອຍໄພລິນ ໃຫ້ຄວາມສົນໃຈຄົນອື່ນຈົນອອກນອກໜ້າ ແຕ່ຄວາມທີ່ຢ້ານຕົວເອງຈະເສຍໜ້າ ພອຍໄພລິນ ກໍເລີຍດຶງເສື້ອ ທາງດ້ານຫລັງເຂົາເອົາໄວ້ຢ່າງລືມຕົວ ແລະ ເວົ້າວ່າ

"ນີ້ນ່າ ເຈົ້າມານັ່ງນໍາພວກຂ້ອຍບໍ່?" ເຂົາງວາກມາພ້ອມກັບເວົ້າວ່າ

" ເຈົ້າເອີ້ນຂ້ອຍຫວະ?"

"ແມ່ນແລ້ວ ໝູ່ຂ້ອຍຢາກຮູ້ຈັກກັບເຈົ້າ" ພອຍໄພລິນ ເວົ້າທັງແນະນໍາພ້ອມບາດ

"ນີ້ແມ່ນແກ້ວມະນີ ມະພາວັນ"

ໜຸ່ມນ້ອຍຍິ້ມໃສ່ສາວໆຕາມມາລະຍາດ ກ່ອນທີ່ຈະຫັນໜ້າມາຫາພອຍໄພລິນ

"ແລະເຈົ້າເດຊື່ຫຍັງ? ຂ້ອຍຊື່ ແພັດ"

ເຂົາຖາມພ້ອມກັບແນະນໍາຕົນເອງ

ພອຍໄພລິນຄິດໃນໃຈວ່າ "ໂທເດາະຊື່ຝຮັ່ງອີກ"

ແຕ່ປາກກໍຕອບອອກໄປພ້ອມກັບຮອຍຍິ້ມຂີບຂັນ

"ຂ້ອຍ ຊື່ ພອຍໄພລິນ "

"ພອຍໄພລິນ ທີ່ແປວ່າ...." ໜຸ່ມນ້ອຍຄົນນັ້ນທໍາທ່າຄິດ

"ແປວ່າອັນຍະມະນີສີນໍ້າເງິນ" ພອຍໄພລິນບອກ

"ອັນຍະມະນີສີນໍ້າເງິນທີ່ງົດງາມ ແລະ ມີຄ່າສູງສົມ ກັບໂຕເຈົ້າເລີຍ"

ແພັດຕອບຕໍ່ປະໂຫຍກ ແລະ ກໍເລີ່ມຈ້ອງເບິ່ງພອຍໄພລິນ ດ້ວຍແສງຕາທີ່ວາວວັບ ແລະ ມີຄວາມໝາຍແປກໆ

"ອ້າວ! ຢືນຢູ່ເຮັດຫຍັງ ເຊີນນັ່ງ"

ພອຍໄພລິນວ່າພ້ອມກັບຫລີກບ່ອນນັ່ງໃຫ້ແກ່ ແພັດ

"ຊັ້ນເຈົ້າບໍ່ນັ່ງຫວະ"

"ບໍ່! ໂຕະຂ້ອຍຢູ່ ພຸ້ນ ຂ້ອຍຈະກັບບ່ອນແລ້ວ"

"ໃຫ້ຂ້ອຍໄປນັ່ງນຳເຈົ້າໄດ້ບໍ່?"

ແພັດເວົ້າ ແລະ ບໍ່ໄດ້ສະແດງທ່າທີ່ສົນໃຈ ແກ້ວມະນີຫຍັງເລີຍ ແລະ ຜູ້ກ່ຽວເອງກໍຮູ້ສຶກຕົວດີຈຶ່ງເຮັດນິສັນຍານໃສ່ ພອຍໄພລິນ ວ່າໃຫ້ເອົາໄປໄດ້ເລີຍພອຍໄພລິນຊືງຢູ່ບຶດໜຶ່ງ ແລະ ນຶກເຖິງຄຳເວົ້າຢອກຂອງໝູ່ເຮັດໃຫ້ນາງເກີດຄວາມຄິດແວບ ຂຶ້ນມາໃນສະໝອງ ແລະ ເລີ່ມພິຈາລະນາໜຸ່ມທີ່ຢືນຮຽງຂ້າງຄັກໆ

"ເອີ ! ເບິ່ງຜູ້ບ່າວນ້ອຍຄົນນີ້ກໍບໍ່ຂີ້ຮ້າຍປານໃດ ແຕ່ສະຕາຍການນຸ່ງເຄື່ອງແລ້ວເປັນຜູ້ໃຫຍ່ເກີນໄວໄປຈັກໜ່ອຍ ສັງເກດເບິ່ງແລ້ວກໍຮູ້ສຶກບໍ່ເປັນຕົວຂອງຕົວເອງເມື່ອຢູ່ໃນສົ້ງສີດຳຊົງຜູ້ເຖົ້າ ແລະ ເສື້ອເຊີດສີນ້ອງຊ້ຳໆແຕ່ກັບໃສ່ສາຍຄໍເຊືອກໜັງສີດຳແບບ ທີ່ໄວລຸ້ນມັກໄດ້ແດ່ ທີ່ມີແຂວໜາກແງ ແລະ ມີຄີ່ວທີ່ດົກໜາ ເຮັດໃຫ້ໜ້າຄືຄົມເຂັ້ມຂຶ້ນ ເມື່ອບວກກັບຜິວດຳຂ້ຳ"

" ຄົງບໍ່ໜ້າກຽດເກີນໄປຖ້າເຮົາພາໄປນັ່ງນຳ " ພອຍໄພລິນ ຄິດພ້ອມກັບງຶກຫົວ

"ກະໄດ້ຢູ່ ແລ້ວໝູ່ເຈົ້າເດຊິບໍ່ຊອກຫາເຈົ້າເບາະ?"

"ບໍ່ເປັນຫຍັງດອກ ຂ້ອຍຈະບອກເຂົາເຈົ້າກ່ອນ"

ເວົ້າແລ້ວກໍຍ່າງໄປຫາໝູ່ ທີ່ຢືນຢູ່ບໍ່ໄກປານໃດ ຊຸບຊິບກັນໜ້ອຍໜຶ່ງແລ້ວເຂົາກໍຍ່າງກັບມາ ໂດຍມີໝູ່ຄົນໜຶ່ງຍ່າງມານຳຫົວແນມເບິ່ງໜ້າຜູ້ສາວທີ່ຢືນຂ້າງໝູ່ຍ່າງສັງເກດ ແລະ ເວົ້າວ່າ

"ແພັດຄັນເຈົ້າຢາກເມືອແລ້ວໄປຫາພວກຂ້ອຍເດີ"

"ໂອເຄ" ແພັດຕອບ ພ້ອມກັບຍ່າງນຳຫລັງພອຍໄພລິນໄປຕ້ອຍໆ

"ປະທິໂທ ເບິ່ງແມ້ ພວກໂຕ ໄພລິນພາຜູ້ບ່າວມາແຫ້"

ພວກສຸລິນທາຕາຕີ່ ພ້ອມທັງຫຍັບຕັ່ງໃຫ້ພອຍໄພລິນ ແລະ ແພັດຫລັງຈາກແນະນຳ ໃຫ້ໝູ່ເພື່ອນຮູ້ຈັກກັບແພັດແລ້ວ ສະພາບການກໍເຂົ້າສູ່ສະພາບປົກະຕິໃຜກໍສົນໃຈລົມນຳແຕ່ຄູ່ຄືນເອງ

ສ່ວນພອຍໄພລິນ ຮູ້ສຶກວ່າບັນຍາກາດຈະງຽບຈັກໜ່ອຍ ເພາະຄູ່ສົນທະນາຂ້ອນຂ້າງສະຫງ່ຽມຈຽມຕົວ ແລະ ມີທີທ່າລະມັດລະວັງຕົວເປັນພິເສດ ຈົນເຮັດໃຫ້ນາງອົດບໍ່ໄດ້ ກໍເລີຍຖາມອອກໄປວ່າ

"ເຈົ້າບໍ່ມ່ວນຫວ່າຄືມິດບໍ່ປາກ"

"ມ່ວນແຕ່ຂ້ອຍຢ້ານແຟນເຈົ້າຊິມາຮ້າຍຂ້ອຍ"

"ກະດຽວວ່າເລື່ອງຫຍັງ ບໍ່ຕ້ອງຕົກໃຈດອກ ຂ້ອຍຍັງບໍ່ທັນມີແຟນ"

"ແທ້ຫວະ!" ແພັດມີອາການດີໃຈຈົນອອກນອກໜ້າ ເຮັດໃຫ້ພອຍໄພລິນ ອົດຍິ້ມບໍ່ໄດ້ ແລະ ຖາມອອກໄປວ່າ"ແລ້ວເຈົ້າເດ?"

"ຂ້ອຍກໍບໍ່ມີຂ້ອຍເວົ້າຄວາມຈິງຂ້ອຍບໍ່ມັກຄົນຂີ້ຕົວະຄືກັນ"

ພອຍໄພລິນ ຮູ້ສຶກເກີ້ງ ວາດໃດວາດໜຶ່ງ ນາງປະສົມເຄື່ອງດື່ມ ແລະ ຍື່ນໃຫ້ແພັດ

"ເອົາກິນນ້ຳຊະ ຄ່າທີ່ເຈົ້າກັບຂ້ອຍຍັງບໍ່ມີແຟນຄືກັນ"

"ຂອບໃຈຫຼາຍໆ" ແພັດຮັບເອົາທັງກ່າວຂອບໃຈ

"ເຈົ້າມັກອອກຫຼິ້ນເລື້ອຍບໍ່?" ພອຍໄພລິນຫາເລື່ອງມາສົນທະນາ ແລະ ກໍຮູ້ສຶກຖືກຊະຕາ ກັບໝູ່ຄົນໃໝ່ບໍ່ໜ້ອຍ ໂດຍມາດເວົ້າຊື່ໆ ແລະ ສ່ານຽງບໍ່ຊັດເຈນປານໃດ ແຕ່ກໍບໍ່ໄດ້ສົງໄສຫຍັງຈົນແພັດ ຕອບຄ່ອຍໆວ່າ

"ບໍ່...ຂ້ອຍເຄີຍໄປແຕ່ໂພນໂຮງ ແລະ ວັງວຽງ"

"ອ້າວ ເຈົ້າໄປເຮັດຫຍັງເຮືອນເຈົ້າຢູ່ພຸ້ນບໍ ? ຫຼື ເຈົ້າມັກໄປພັກຜ່ອນຕາກອາກາດຢູ່ວັງວຽງ"

"ບໍ່ແມ່ນ ຂ້ອຍໄປເຮັດວຽກຊ່ວຍພໍ່ຂ້ອຍ ແລະ ຂ້ອຍຈະກັບມື້ອື່ນີ້ແລ້ວ" ສຸດທ້າຍສຽງເຂົາຊຶງເສົ້າໆ ພອຍໄພລິນຫັນໜ້າມາເບິ່ງເຂົາ ແວວຕາມີເຄື່ອງໝາຍຄຳຖາມຢູ່ເຕັມ

"ເຈົ້າຈະກັບໄປໃສ ເຈົ້າບໍ່ໄດ້ຢູ່ວຽງຈັນນີ້ບໍ?"

"ຂ້ອຍຢູ່ ອິດສະຕາລີ "

"ຫະ! ເຈົ້າມາແຕ່ອິດສະຕາລີຫວະ?"

ພອຍໄພລິນ ຫລິງອຸທານໝົດແຮງຈົນເປັນເຫດໃຫ້ສຸລິນທາທີ່ນັ່ງຢູ່ຂ້າງໆ ຫັນມາຖາມ

"ແມ່ນຫຍັງເກາະໄພລິນ"

ກະສິບໍ່ໃຫ້ພອຍໄພລິນ ຕື່ນໄດ້ແນວໃດ ເພາະບັນດາໝຸ່ມນ້ອຍ ທີ່ເຂົ້າມາສູ່ຊີວິດຂອງນາງ ສ່ວນຫຼາຍມັກມາຈາກດິນແດນກົງກູຣູທັງນັ້ນ ຊຶ່ງເປັນບ່ອນທີ່ນັກສຶກສາລາວ ນິຍົມກັນໄປຮຽນຕໍ່ກັນ ແລະ ໂດຍສະເພາະລູກຜູ້ດີມີເງິນສະໄໝນີ້ ກໍມັກໄປອວດຄວາມລວຍກັນ ຢູ່ຫັ້ນ, ອີກອັນໜຶ່ງ ບໍ່ແມ່ນນາງເບິ່ງຄົນບໍ່ອອກ ແພັດບໍ່ຊຶງຄືຄົນມາແຕ່ເມືອງນອກເມືອງນາປານໃດ ຕົນໂຕກໍດຳແຕ່ງຕົວກໍບໍ່ຄ່ອຍມີລົດນິຍົມ ມີຢ່າງດຽວທີ່ນາງສົງໄສກໍຄື ເຂົາມັກຊຶງແບບໃຊ້ຄວາມຄິດເວລາຟັງນາງເວົ້າ ແລະ ຄຳເວົ້າເປັນຕາຢາກຫົວ ຄ້າຍໆຄືກັບພີ່ນ້ອງຂອງນາງ ທີ່ມາຈາກອາເມລິກາມີພຽງຊື່ເທົ່ານັ້ນທີ່ ອອກສາກົນເຕັມຕົວ ແຕ່ກໍບໍ່ແປກຫຍັງ ເພາະດຽວນີ້ພໍ່ແມ່ຕັ້ງຊື່ຫລັ່ນໃຫ້ລູກເປັນຝຣັ່ງກໍມີຖົມເຖໄປ ເມື່ອເຫັນເພື່ອນຄົນໃໝ່ສົງໆ ແພັດເລີຍເວົ້າຢ້ຳວ່າ

"ແມ່ນແລ້ວ ແລະ ຂ້ອຍມາຕອນພັກຮຽນ ເພື່ອມາຊ່ອຍວຽກພໍ່ເພິ່ນເຮັດທຸລະກິດຂາຍໄມ້ ແລະ ເຫລົ້າ"

"ສົງໄສຂາຍເຫລົ້າໂທກັບໄມ້ຈີ້ມແຂ່ວບໍ່ຈັກ"

ສຸລິນທາ ກະຊິບສຽງບໍ່ຄ່ອຍປານໃດກັບພອຍໄພລິນ ແຕ່ເບິ່ງຊຶງ

ແພັດຄື ຈະບໍ່ເຂົ້າໃຈ ນາງໃຊ້ສາຍຕາສຳຫຼວດເບິ່ງຜູ້ນັ່ງທາງຂ້າງຢ່າງບໍ່ຄ່ອຍເຊື່ອ ແຕ່ແພັດກໍ່ມີທ່າທາງປົກກະຕິ

"ໂທ້ ເຮັດທຸລະກິດ ຄ້າໄມ້ຄ້າເຫຼົ້າ ມີແຕ່ແມວສາງສັນຄົງ ລ້ຳລວຍບໍ່ແມ່ນງ່າຍ"

ນາງວິຈານໃນໃຈ

"ເຈົ້າຢາກກິນຫຍັງບໍ່ ຂ້ອຍມີເງິນຢູ່ໃດຊິຊື້ໃຫ້ເຈົ້າກິນ"

ຄຳເວົ້າຊື່ໆແບບນີ້ ເຮັດໃຫ້ນາງຄິດຮອດຄຳທີ່ຄົນເວົ້າວ່າ ພວກເມືອງນອກນີ້ ເວລາໄປກິນອາຫານ ເຂົາເຈົ້າຈະຈ່າຍໃຜຈ່າຍມັນແຕ່ຖ້າຖືກໃຈສຸດແລ້ວຈຶ່ງຈະຖາມລ້ຽງ

"ວ່າຈັ່ງໃດເຈົ້າຊິສັ່ງເອົາຫຍັງອີກບໍ່?" ເຂົາຢ້ຳ ພອຍໄພລິນເລີຍຕອບວ່າ

"ວ່າແຕ່ເຈົ້ານັ້ນຢາກກິນຫຍັງຕື່ມບໍ່ ພວກຂ້ອຍສັ່ງກິນຍັງ ບໍ່ໄດ້ເຄິ່ງໜຶ່ງຂອງວົງເງິນຂອງໂຕະພິເສດນີ້" ແພັດມີທ່າທີເຂົ້າໃຈ ນາງຫຼຽວພິຈາລະນາເບິ່ງ ແພັດຢ່າງບໍ່ເກງໃຈທັງຢາກຖາມອາຍຸຂຶ້ນມາທັນທີ ແຕ່ແພັດ ກໍເດົາຄວາມຄິດອອກເຂົາຕອບກ່ອນວ່າ

"ເຮົາເປັນໝູ່ກັນບໍ່ຕ້ອງຖາມອາຍຸ"

ພອຍໄພລິນມີທ່າທີອາຍໆທີ່ແພັດເດົາໃຈອອກ

"ມື້ອື່ນເຈົ້າໄປກິນເຂົ້າເຮືອນຂ້ອຍໄດ້ບໍ່ ? ເພື່ອເປັນການລ້ຽງສົ່ງຂ້ອຍ"

ຄູ່ສົນທະນາເອີ່ຍຊວນ ນາງຫຼຽວເບິ່ງໜ້າເຂົາ ຢ່າງບໍ່ພໍໃຈ ແລະຮູ້ສຶກຕຳກຣດ ທີ່ຮູ້ຈັກກັນບໍ່ພໍທ່ໃດຊົ່ວໂມງ ອ້າຍບ່າວຄົນນີ້ກໍ່ມີໜ້າມາຊວນເມືອເຮືອນແລ້ວແຕ່ ເມື່ອຈ້ອງເບິ່ງໃບໜ້າທີ່ຊື່ໆ ແລະ ແວວຕາທີ່ບໍລິສຸດໃຈເຮັດໃຫ້ ນາງປັດຄວາມຮູ້ສຶກຮ້າຍໆອອກໄປ ແລະ ເອີ່ຍຂຶ້ນວ່າ

"ເຮືອນເຈົ້າຢູ່ທາງໃດເກາະຂ້ອຍລືມແລ້ວທີ່ເຈົ້າບອກ"

"ຂ້ອຍກໍຮູ້ແຕ່ວ່າ ຢູ່ທາງນີ້ທີ່ງມາແຕ່ຂ້ອຍລືມຊື່ບ້ານ"

"ອ້າວ! ຢູ່ວຽງຈັນມີທາງທີ່ງມາຢູ່ຫຼາຍບ່ອນ ຄັນເຈົ້າບໍ່ຮູ້ຮອດຊື່ບ້ານຕົວເອງແລ້ວຂ້ອຍຈະໄປໄດ້ແນວໃດ ຍັງຕ້ອງຄອບພໍ່ ຄອບແມ່ອີກເພິ່ນກໍບໍ່ອະນຸຍາດລະຕິ ຂ້ອຍຄືຊິບໍ່ໄດ້ໄປດອກ"

"ເປັນຫຍັງ ຂ້ອຍຈະໄປຮັບເຈົ້າ ແລະ ຈະໄປຄອບໃຫ້ ບໍ່ຊັ້ນກໍຈະໃຫ້ພໍ່ຂ້ອຍໄປຮັບ"

"ເດັກນ້ອຍເອີຍ ຄືຊິຫາກໍ່ຮຽນລືມສາວລະຕິ"

ນາງຄິດໃນໃຈ ທັງຮູ້ສຶກສົງສານ ໃນຄຳເວົ້າຊື່ໆ ຈຶ່ງຕອບພໍມັນຄືວ່າ

"ຄັນຊັ້ນຂ້ອຍຕ້ອງໄດ້ເອົາໝູ່ຂ້ອຍໄປນຳ ສອງຄົນໄດ໋ ເຈົ້າຊິເຮັດຈັ່ງໃດ ຄັນເຈົ້າມີລົດຈັກເຈົ້າຊິທຮວມາຮັບໄດ້ບໍ່?"

"ໄດ້ ຂ້ອຍກໍມີລົດໃຫຍ່ໄດ໋ ເຈົ້າເອົາໝູ່ເຈົ້າໄປນຳກໍໄດ້, ຕົກລົງເນາະ ມື້ອື່ນຂ້ອຍຈະໂທໄປຫາເຈົ້າ"

"ແລ້ວເຈົ້າຮູ້ເບີໂທຂ້ອຍແລ້ວຫວ່າ?"

"ຍັງກຳລັງຈະຖາມຢູ່ພໍດີ" ພອຍໄພລິນກໍບອກໄປແບບແກ້ງເວົ້າໄວໆ ແລະ ຖາມຄືນແຕ່ຜູ້ກຮອຈຳໄດ້ທັນທີ

"ດີແລ້ວມື້ອື່ນໃຫ້ໂທຫາຂ້ອຍ ຖ້າກາຍຕອນບ່າຍແປວ່າໝົດສິດ" ນາງເວົ້າຢອກໆ

"ແນ່ນອນ ຂ້ອຍສັນຍາ"

ສຽງເວົ້ານີ້ຈິງຈັງອີ່ຫລີ ແຕ່ພອຍໄພລິນ ກັບຖືເປັນຫລິ້ນໆ ພໍດີສຽງເພງຈັງຫວະສະໂລບັນເລງຂຶ້ນ ຫລາຍໆຄູ່ກໍໄປເຕັ້ນລຳກັນແຕ່ພອຍໄພລິນກໍນັ່ງເສີຍ ນາງເຄີຍບອກກັບຕົວເອງວ່າ ສຳລັບຈັງຫວະນີ້ຂໍສະຫງວນລິຂະສິດເອົາໄວ້ໃຫ້ ຜູ້ທີ່ນາງໝັ້ນໃຈວ່າ ເປັນຄູ່ຮັກຕົວຈິງເທົ່ານັ້ນເພາະໄປເຕັ້ນບໍ່ເລືອກ ຮູ້ສຶກວ່າຄຸນຄ່າໃນຕົນເອງ ຈະລົດລົງໃນສາຍຕາ

ຂອງຄົນອື່ນ ແຕ່ໜຸ່ມນ້ອຍທີ່ນັ່ງຢູ່ຂ້າງໆ ກັບມີອາການ ກະອິກກະອາຍ ແບບໃດແບບໜຶ່ງ ແລະ ໃນທີ່ສຸດເຂົາກໍຫັນມາຫາພອຍໄພລິນ ແລະ ເວົ້າວ່າ

"ໄພລິນໄປເຕັ້ນລຳກັບຂ້ອຍໄດ້ບໍ່? "

"ແມ່ນຫຍັງເກາະ?" ນາງບໍ່ຢາກເຊື່ອວ່າ ໜຸ່ມຄົນນີ້ຈະກ້າມາຂໍນາງເຕັ້ນລຳ

"ເຕັ້ນລຳກັບຂ້ອຍໄດ້ບໍ່?" ສຽງເວົ້າວິງວອນ

"ໂທຄືມາໄວໄຟແທ້ " ນາງຄິດໃນໃຈແຕ່ ເມື່ອຢຸດຄິດໜ້ອຍໜຶ່ງ ແລະ ເຫັນໝູ່ຊາຍຄົນຢ່າງອອກສູ່ເວທີ ນາງກໍຕອບໄປວ່າ

"ເອົ້າ ໂອເຄ"

ນາງເວົ້າພ້ອມກັບລຸກຂຶ້ນຢືນ ໂດຍມີຄູ່ເຕັ້ນນຳຫລັງໄປຕິດໆ ແຕ່ຄົນກໍຫຼາຍແທ້ໆ ເພງໄດ້ບັນເລງໄປໄດ້ເປັນເພງທີສາມແລ້ວ ເພື່ອຊີຮອດເວທີກໍເຮັດໃຫ້ຮູ້ສຶກວ່າຕົນເອງເປັນຜູ້ຢາກເຕັ້ນແຮງ ສອງຄົນຢືນປິ່ນໜ້າເບິ່ງກັນໜຶ່ງວິນາທີ ແຕ່ເພງຈັງຫວະສະໂລ ກໍຫຍຸດລົງກະທັນຫັນ ແລະປ່ຽນເປັນຈັງຫວະລຳວົງລາວ ສຽງຄົນໂຮຂຶ້ນຢ່າງບໍ່ຊາບສາເຫດ ພອຍໄພລິນຫົວຄິກໆ ກັບກິລິຍາຂອງຄູ່ເຕັ້ນທີ່ບົ່ງບອກວ່າ ເສຍດາຍສຸດໆຈົນຫລົງເວົ້າອອກມາວ່າ

"ເປັນນຳຂ້ອຍຄິດຄົນໂພດ ຂ້ອຍຄວນຂໍເຈົ້າເຕັ້ນແຕ່ເພງທຳອິດ"

"ຄົນສວຍໂອກາດ ສົມນໍ້າໜ້າຢາກມາຫາກຳໄລນຳເພງ ສະໂລເທາະດາບໍ່ພ້ອມຊະ" ໃຈນາງຄິດເກືອບຫຼຸດປາກເວົ້າອອກໄປ ແຕ່ກັບຄິດໄດ້ເລີຍເວົ້າອອກໄປວ່າ

"ຟ້ອນລຳວົງລາວນີ້ກໍມ່ວນຄືກັນນັ້ນລະ"

ພອຍໄພລິນເປັນນັກຟ້ອນສິລະປະ ທີ່ຜ່ານການຝຶກຝົນມາມາຢ່າງດີໄດ້ເພງມ່ວນຂຶ້ນໃຈ ກໍເລີຍເຮັດໃຫ້ໜຸ່ມນ້ອຍຫລົງຊົມເຊີຍອອກມາວ່າ

"ໄພລິນເຈົ້າຟ້ອນງາມໆ"

"ແທ້ຫວາ ບໍ່ແມ່ນຕັ້ງແກ້ວຍ້ອງຊື່ໆບໍລະ!"

ນາງທັງເວົ້າທັງຍິ້ມ ເພາະຄິດຢາກຫົວທີ່ຕົນເອງກໍມັກຍ້ອງ ຄືກັນ ຕໍ່ຈາກນັ້ນ ກໍໄດ້ຍິນຄຳຍ້ອງຕິດຍ້ອງ ຕໍ່ຈາກໃບໜ້າຊື່ໆ ຈົນກັບມານັ່ງ ບ່ອນກໍຍັງນຳມາຍ້ອງບໍ່ເຊົາ ເຮັດໃຫ້ໝູ່ຂອງນາງຄວັກຂ້າງ ກັນມາຟັງ ແລະ ເຮັດອາການຄືຊິສະມັກແບບກິນຫຍັງບໍ່ລົງ ແຕ່ພອຍໄພລິນກັບຍິ້ມ ຫົວຢ່າງມີຄວາມສຸກ ທີ່ໄດ້ກັ່ນແກ້ວໝູ່ທາງອ້ອມ

ຕະຫລອດເວລາ ທີ່ຢູ່ໃນງານບໍ່ວ່າ ນາງຈະຍ່າງໄປທາງໃດແພັດ ຈະຕິດຕາມໄປຕະຫລອດທັ້ງໆ ທີ່ນາງບໍ່ໄດ້ບອກ ເຂົາຈະກະວົນກະວາຍ ໃຈ ແລະ ເມື່ອພໍ້ໜ້າກັບນາງເຂົາກໍຈະເວົ້າຊື່ໆ ເລີຍວ່າ

"ຂ້ອຍຢ້ານເຈົ້າເສຍ"

"ອ້າວ! ຂ້ອຍຊິມາເສຍຫຍັງຢູ່ໜີ້"

"ຂ້ອຍໝາຍຄວາມວ່າ ຢ້ານຫລົງກັນ ແລ້ວຂ້ອຍຈະບໍ່ໄດ້ພົບກັບ ເຈົ້າຂ້ອຍຖືວ່າຂ້ອຍໂຊກດີຫລາຍ ທີ່ເຈົ້າມາທັກຂ້ອຍ ຂ້ອຍເຫັນເຈົ້າແຕ່ ດົນແລ້ວ ເຈົ້າຍືນຢູ່ກັບໝູ່ເຈົ້າ ເຈົ້າງາມຫລາຍ ຂ້ອຍຄິດວ່າເຈົ້າຕ້ອງມາ ກັບແຟນ, ຂ້ອຍຈະບໍ່ເຮັດໃຫ້ຂ້ອຍພາດໂອກາດດີໆທີ່ໄດ້ພົບກັບເຈົ້າແບບ ນີ້ໄປດອກ" ຄຳເວົ້າຍາວໆ ທີ່ອອກມາຈາກປາກຂອງ ແພັດເປັນຄຳເວົ້າ ຊື່ໆ ແຕ່ນ້ຳສຽງຂອງເຂົາສະແດງຄວາມຈິງຈັງ ພ້ອມທັງສີໜ້າ ແລະ ແວວຕາແພັດຂໍໄປຫາໝູ່ບຶດໜຶ່ງ ແລະ ບອກນາງວ່າ

"ເຈົ້າຢ່າໄປໃສເດີຈັກໜ້ອຍຂ້ອຍມາຊິໃຫ້ເຈົ້າບອກທາງໄປເຮືອນ ເຈົ້າກັບໝູ່ຂ້ອຍ ເພາະຂ້ອຍບໍ່ຮູ້ທາງວ່າຮຽງຈັ່ນ ດີປານໃດ" ແພັດກັບມາ ພ້ອມກັບໝູ່ ແລະ ໃຫ້ນາງບອກວ່າ ເຮືອນຢູ່ໃສຈົນເປັນທີ່ເຂົ້າໃຈດີບໍ່ດົນ ບັນຍາກາດກໍຄຶກຄື້ນຂຶ້ນກ່ອນເກົ່າ ເພາະພິທີກອນປະຈຳງານໄດ້ປະກາດ ວ່າຈະນັບຖອຍຫຼັງ ເພື່ອກຽມຮັບປີໃໝ່ ແຕ່ລະໂຕະກໍກຽມໄຂເຫຼົ້າ "

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ